ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ /ລບ
ນະຄອນຫຼວງວຽງຈັນ, ວັນທີ 2025

(ຮ່າງ)

# ດຳລັດ
# ວ່າດ້ວຍການເຄື່ອນໄຫວຢູ່ບໍລິເວນຊາຍແດນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍຊາຍແດນແຫ່ງຊາດ ສະບັບເລກທີ 10/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງການຕ່າງປະເທດ ສະບັບເລກທີ ... , ລົງວັນທີ ... .

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄວາມເປັນເອກະພາບ, ປະສິດທິພາບ ແລະ ປະສິດທິຜົນ ແນໃສ່ເພີ່ມທະວີການສ້າງ, ຄຸ້ມຄອງ ແລະ ປ້ອງກັນບໍລິເວນຊາຍແດນ, ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 ການເຄື່ອນໄຫວຢູ່ບໍລິເວນຊາຍແດນ

ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ແມ່ນ ການ ອາໄສ, ເຂົ້າ-ອອກ, ເດີນທາງ, ຜະລິດ, ດຳເນີນທຸລະກິດ, ສຳຫຼວດ ວັດແທກ, ຖ່າຍພາບທາງອາກາດ, ການສ້າງແຜນທີ່ ແລະ ຂຸດຄົ້ນ ຊັບພະຍາກອນທຳມະຊາດ, ກໍ່ສ້າງ, ຈັດຕັ້ງປະຕິບັດໂຄງການ ແລະ ເຄື່ອນໄຫວອື່ນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ຍານພາຫະນະ ທີ່ກ່ຽວຂ້ອງກັບການ ສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ ລວມທັງການປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນຂອງ ສປປ ລາວ.

*ຕົວໜັງສືສີແດງແມ່ນ ການປັບປຸງໃນກອງປະຊຸມຄະນະຮັບຜິດຊອບ ຄັ້ງທີ 3*

**ມາດຕາ 3 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຢູ່ບໍລິເວນຊາຍແດນ ຂອງ ສປປ ລາວ.

## ໝວດທີ 2
## ບໍລິເວນຊາຍແດນ

**ມາດຕາ 4 ບໍລິເວນຊາຍແດນ**

ບໍລິເວນຊາຍແດນ (Land Border Areas) ແມ່ນ ເຂດການປົກຄອງຂັ້ນບ້ານ ທີ່ມີເຂດແດນສ່ວນໜຶ່ງຕິດກັບຊາຍແດນແຫ່ງຊາດ ລວມທັງເຂດເສດຖະກິດພິເສດຢູ່ບໍລິເວນຊາຍແດນ ແລະ ເຂດເສດຖະກິດອື່ນ. ການກຳນົດເຂດແດນຂອງບໍລິເວນຊາຍແດນ ໃຫ້ນັບແຕ່ຊາຍແດນແຫ່ງຊາດເຂົ້າມາຈົນສຸດເຂດການປົກຄອງຂອງບ້ານທີ່ມີເຂດແດນສ່ວນໜຶ່ງຕິດກັບຊາຍແດນແຫ່ງຊາດ.

ບໍລິເວນຊາຍແດນ ປະກອບດ້ວຍ ຂອບເຂດຊາຍແດນ ແລະ ເຂດຫວງຫ້າມ ຊຶ່ງມີປ້າຍຊີ້ບອກສະເພາະ.

ບັນຊີລາຍຊື່ບ້ານບໍລິເວນຊາຍແດນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບ ບ້ານທີ່ຢູ່ບໍລິເວນຊາຍແດນ ແຕ່ບໍ່ຢູ່ໃນບັນຊີລາຍຊື່ບ້ານບໍລິເວນຊາຍແດນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແມ່ນ ໃຫ້ປະຕິບັດ ຕາມກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 5 ຂອບເຂດຊາຍແດນ**

ຂອບເຂດຊາຍແດນ (Border Belt) ແມ່ນ ດິນແດນສ່ວນໜຶ່ງນັບແຕ່ເສັ້ນຊາຍແດນແຫ່ງຊາດ ເລິກເຂົ້າດິນແດນຂອງ ສປປ ລາວ, ບ່ອນແຄບສຸດແມ່ນ 100 ແມັດ, ບ່ອນກ້ວາງສຸດບໍ່ເກີນ 1,000 ແມັດ ແລະ ມີປ້າຍຊີ້ບອກ “ຂອບເຂດຊາຍແດນ”.

ການກຳນົດຄວາມກວ້າງຂອງຂອບເຂດຊາຍແດນ ຕ້ອງໄດ້ອີງໃສ່ຄວາມເໝາະສົມຂອງສະພາບການດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເສດຖະກິດ-ສັງຄົມ, ພູມສັນຖານຂອງປະເທດ. ເຂດທີ່ມີ ດ່ານຊາຍແດນ, ຕະຫຼາດຊາຍແດນ, ເຂດເສດຖະກິດພິເສດ ຕ້ອງອີງໃສ່ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ.

ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ເປັນຜູ້ກຳນົດຂອບເຂດຊາຍແດນ ທີ່ມີຄວາມກວ້າງແຕ່ 100 ແມັດ ຫາ 1,000 ແມັດ ພາຍຫຼັງທີ່ໄດ້ຂໍຄຳເຫັນເປັນລາຍລັກອັກສອນຈາກກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ ແລະ ໄດ້ຜ່ານການຮັບຮອງຈາກສະພາປະຊາຊົນຂັ້ນແຂວງ. ໃນກໍລະນີພູມສັນຖານຂອງປະເທດ ຮຽກຮ້ອງໃຫ້ກຳນົດຂອບເຂດຊາຍແດນທີ່ມີຄວາມກວ້າງ ຕໍ່າກວ່າ 100 ແມັດ ຫຼື ເກີນກວ່າ 1,000 ແມັດ ໃຫ້ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ຕ້ອງສະເໜີສະພາປະຊາຊົນຂັ້ນແຂວງຮັບຮອງ ແລະ ສະເໜີໄປຍັງນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງ ໂດຍຜ່ານຄະນະກຳມະການຊາຍແດນແຫ່ງຊາດ.

**ມາດຕາ 6 ເຂດຫວງຫ້າມ**

ເຂດຫວງຫ້າມ (Restricted Zone) ແມ່ນ ເນື້ອທີ່ສ່ວນໜຶ່ງຢູ່ບໍລິເວນຊາຍແດນ ຊຶ່ງຖືກກຳນົດ ເພື່ອຄຸ້ມຄອງ, ປ້ອງກັນ ແລະ ປົກປັກຮັກສາ ຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນ

ລະບຽບຮຽບຮ້ອຍຂອງສັງຄົມ ລວມທັງສະກັດກັ້ນ ແລະ ຕ້ານການຮຸກຮານ, ທຳລາຍ, ຂຸດຄົ້ນ, ເກັບກຳຄວາມລັບຂອງຊາດ.

ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ຕ້ອງປະສານສົມທົບກັບກອງບັນຊາການທະຫານຂັ້ນແຂວງ, ຫ້ອງທະຫານຊາຍແດນຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ໃນການສ້າງລະບຽບການຄຸ້ມຄອງເຂດຫວງຫ້າມ ແລະ ສະເໜີຕໍ່ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ເພື່ອພິຈາລະນາຕົກລົງ ພາຍຫຼັງທີ່ສະພາປະຊາຊົນຂັ້ນແຂວງຮັບຮອງ.

ສຳລັບ ໂຄງການປ້ອງກັນຊາດ, ອົງການທີ່ກ່ຽວຂ້ອງຂອງກະຊວງປ້ອງກັນປະເທດ ຕ້ອງຊີ້ນຳກອງບັນຊາການທະຫານຂັ້ນແຂວງ, ຫ້ອງທະຫານຊາຍແດນຂັ້ນແຂວງ ເພື່ອກຳນົດລັກສະນະຂອງໂຄງການທີ່ຕ້ອງການກຳນົດເປັນເຂດຫວງຫ້າມ. ຈາກນັ້ນ, ໃຫ້ສັງລວມ ແລະ ລາຍງານຕໍ່ກົມໃຫຍ່ເສນາທິການກອງທັບ ເພື່ອສະເໜີລັດຖະມົນຕີກະຊວງປ້ອງກັນປະເທດ ພິຈາລະນາຕົກລົງ.

ສຳລັບ ໂຄງການຊາຍແດນ, ກອງບັນຊາການທະຫານຊາຍແດນຊີ້ນຳຫ້ອງທະຫານຊາຍແດນຂັ້ນແຂວງ ໃຫ້ປະສານສົມທົບກັບກອງບັນຊາການທະຫານຂັ້ນແຂວງ, ພາກສ່ວນທີ່ກ່ຽວຂ້ອງ ເພື່ອກຳນົດລັກສະນະຂອງໂຄງການທີ່ຕ້ອງກຳນົດເປັນເຂດຫວງຫ້າມ. ຈາກນັ້ນ, ໃຫ້ສັງລວມ ແລະ ລາຍງານໃຫ້ ຫົວໜ້າກອງບັນຊາການທະຫານຊາຍແດນ ເພື່ອຜ່ານກົມໃຫຍ່ເສນາທິການກອງທັບ ແລະ ສະເໜີລັດຖະມົນຕີກະຊວງປ້ອງກັນປະເທດ ພິຈາລະນາຕົກລົງ.

ພາຍຫຼັງກຳນົດເຂດຫວງຫ້າມສຳເລັດ, ອົງການທີ່ຄຸ້ມຄອງ ຕ້ອງສ້າງລະບຽບການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

### ມາດຕາ 7 ຮູບແບບ ແລະ ບ່ອນຕິດຕັ້ງ ປ້າຍຊີ້ບອກຢູ່ບໍລິເວນຊາຍແດນ

ປ້າຍຊີ້ບອກຢູ່ບໍລິເວນຊາຍແດນ ເປັນແຜ່ນເຫຼັກ ທີ່ມີຄວາມໜາ 1.5 ມິນລີແມັດ, ເສົາເຫຼັກເປັນທໍ່ ທີ່ມີເສັ້ນຜ່າສູນກາງ 100 ມິນລີແມັດ, ໜາ 2 ມິນລີແມັດ ແລະ ສູງຈາກໜ້າດິນ 1.8 ແມັດ; ພື້ນປ້າຍເປັນສີຟ້າ ແລະ ຕົວໜັງສືສີຂາວ ທີ່ສາມາດສະທ້ອນແສງໄຟ; ເສົາປ້າຍມີລາຍສີຂາວ ແລະ ແດງ ທີ່ສາມາດສະທ້ອນແສງໄຟ; ຕົວໜັງສືທີ່ຂຽນຢູ່ປ້າຍມີ 3 ແຖວ: ແຖວທີໜຶ່ງຂຽນເປັນພາສາລາວ, ແຖວທີສອງຂຽນເປັນພາສາຂອງປະເທດເຊິ່ງໜ້າ, ແຖວທີສາມຂຽນເປັນພາສາອັງກິດ. ຂະໜາດຂອງປ້າຍ, ຕົວໜັງສືຢູ່ປ້າຍ ໃຫ້ປະຕິບັດຕາມຮູບແບບ (ແບບຟອມ) ທີ່ຄັດຕິດໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້.

ປ້າຍຊີ້ບອກຢູ່ບໍລິເວນຊາຍແດນ ປະກອບມີປ້າຍຊີ້ບອກ "ບໍລິເວນຊາຍແດນ", "ຂອບເຂດຊາຍແດນ", "ເຂດຫວງຫ້າມ" ແລະ ປ້າຍຊີ້ບອກອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ການຕິດຕັ້ງປ້າຍຊີ້ບອກຢູ່ບໍລິເວນຊາຍແດນ ໃຫ້ປະຕິບັດ ດັ່ງນີ້:

1. ປ້າຍ "ບໍລິເວນຊາຍແດນ" ຕ້ອງຕິດຕັ້ງຢູ່ເຂດຕໍ່ກັນລະຫວ່າງບ້ານທີ່ມີເຂດແດນການປົກຄອງຕິດກັບບໍລິເວນຊາຍແດນກັບບ້ານພາຍໃນ; ຕິດຕັ້ງຢູ່ສະຖານທີ່ ທີ່ເຫັນໄດ້ງ່າຍ, ຂ້າງທາງຈາລະຈອນ (ທາງບົກ, ທາງລົດໄຟ, ທາງນ້ຳ) ທີ່ຈະເຂົ້າໄປບໍລິເວນຊາຍແດນ.

2. ປ້າຍ "ຂອບເຂດຊາຍແດນ" ຢູ່ບໍລິເວນຊາຍແດນທີ່ມີລັກສະນະເປັນພູດອຍ, ປ່າດົງ ຊຶ່ງມີຄວາມຫຍຸ້ງຍາກໃນການເດີນທາງເຂົ້າ-ອອກ ຕ້ອງຕິດຕັ້ງຢູ່ເບື້ອງຂວາມືຂອງເສັ້ນທາງຈາລະຈອນ ຕາມທິດເຂົ້າໄປຊາຍແດນ. ຢູ່ບໍລິເວນຊາຍແດນທີ່ເປັນທົ່ງພຽງ, ຍາກທີ່ຈະຈຳແນກເຂດແດນ, ປ້າຍ "ຂອບເຂດຊາຍແດນ" ຕ້ອງຕິດຕັ້ງ

ໃນໄລຍະຫ່າງກັນ ແຕ່ 600 ແມັດ ຫາ 1,000 ແມັດ. ປ້າຍ “ຂອບເຂດຊາຍແດນ” ຕ້ອງຕິດຕັ້ງຢູ່ສອງຟາກຂອງເຂດແດນບໍລິເວນດ່ານ ແລະ ບໍ່ໃຫ້ຕິດຕັ້ງຢູ່ຕາມເສັ້ນທາງຈະລາຈອນແຕ່ພາຍໃນອອກໄປຫາດ່ານຊາຍແດນ;

3. ອີງຕາມພູມສັນຖານ ແລະ ລັກສະນະສະເພາະຂອງເຂດຫວງຫ້າມ, ປ້າຍ “ເຂດຫວງຫ້າມ” ຕ້ອງຕິດຕັ້ງຢູ່ບ່ອນທີ່ເໝາະສົມ ແລະ ເຫັນໄດ້ງ່າຍ.

## ໝວດທີ 3
## ການເຄື່ອນໄຫວຢູ່ບໍລິເວນຊາຍແດນ

### ມາດຕາ 8 ການ ອາໄສ ແລະ ປະຕິບັດໜ້າທີ່ຢູ່ບໍລິເວນຊາຍແດນ

1. ບຸກຄົນທີ່ອາໄສ ແລະ ປະຕິບັດໜ້າທີ່ຢູ່ບໍລິເວນຊາຍແດນ ມີ ດັ່ງນີ້:

1.1 ປະຊາຊົນຊາຍແດນ;

1.2 ຜູ້ທີ່ໄດ້ຮັບໜັງສືອະນຸຍາດໃຫ້ອາໄສຢູ່ບໍລິເວນຊາຍແດນ ຈາກໜ່ວຍງານທີ່ມີສິດຂອງຂະແໜງການປ້ອງກັນຄວາມສະຫງົບ;

1.3 ພະນັກງານ, ເຈົ້າໜ້າທີ່ ທີ່ໄດ້ຮັບມອບໝາຍໃຫ້ປະຕິບັດໜ້າທີ່ວິຊາສະເພາະທາງດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ວິຊາສະເພາະອື່ນ ຢູ່ບໍລິເວນຊາຍແດນ.

2. ບຸກຄົນທີ່ບໍ່ອະນຸຍາດໃຫ້ອາໄສຢູ່ບໍລິເວນຊາຍແດນ ມີ ດັ່ງນີ້:

2.1 ຜູ້ທີ່ຖືກຫ້າມບໍ່ໃຫ້ອາໄສຢູ່ບໍລິເວນຊາຍແດນ, ຜູ້ທີ່ບໍ່ໄດ້ຮັບອະນຸຍາດໃຫ້ອອກນອກປະເທດ, ຜູ້ທີ່ຖືກໂຈະການອອກນອກປະເທດ;

2.2 ຜູ້ທີ່ຖືກອົງການທີ່ມີສິດສັ່ງຫ້າມເດີນທາງອອກຈາກທີ່ພັກອາໄສ;

2.3 ຜູ້ທີ່ຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ແຕ່ຍັງບໍ່ທັນມີຄຳຕົກລົງໃຫ້ຈັດຕັ້ງປະຕິບັດຄຳຕັດສິນ, ຜູ້ທີ່ຖືກໂຈະການປະຕິບັດໂທດ, ຜູ້ທີ່ໄດ້ຮັບອະນຸຍາດໃຫ້ເລື່ອນ ຫຼື ໂຈະ ການຈຳຄຸກ; ຜູ້ທີ່ກຳລັງຢູ່ໃນການຄວບຄຸມການປະພຶດ;

2.4 ຜູ້ທີ່ຖືກມາດຕະການສຶກສາອົບຮົມຢູ່ເມືອງ/ບ້ານ, ຜູ້ທີ່ຖືກສົ່ງໄປສູນດັດສ້າງ, ແຕ່ໄດ້ຮັບອະນຸຍາດໃຫ້ເລື່ອນ ຫຼື ໂຈະການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ;

2.5 ບຸກຄົນ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້.

### ມາດຕາ 9 ການເຂົ້າໄປບໍລິເວນຊາຍແດນ

1. ພົນລະເມືອງລາວ ທີ່ບໍ່ແມ່ນປະຊາຊົນຊາຍແດນ ຈະເຂົ້າໄປບໍລິເວນຊາຍແດນ ໃຫ້ປະຕິບັດ ດັ່ງນີ້:

1.1 ຕ້ອງສະແດງບັດປະຈຳຕົວ ຫຼື ໜັງສືຢັ້ງຢືນຕົວຕົນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ຕໍ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

1.2 ໃນກໍລະນີຕ້ອງຢູ່ຄ້າງຄືນ ຕ້ອງໄດ້ຮັບອະນຸຍາດຈາກອົງການປົກຄອງບ້ານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

1.3 ເມື່ອສິ້ນສຸດການພັກເຊົາຕາມເວລາທີ່ກຳນົດ ຕ້ອງອອກຈາກບໍລິເວນຊາຍແດນ. ໃນກໍລະນີທີ່ຕ້ອງພັກເຊົາເກີນກຳນົດເວລາ ຕ້ອງໄດ້ຂໍອະນຸຍາດຕໍ່ພັກເຊົານຳອົງການປົກຄອງບ້ານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຕື່ມ.

2. ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ພັກເຊົາຊົ່ວຄາວ ຫຼື ດຳລົງຊີວິດຖາວອນ ຢູ່ ສປປ ລາວ ຈະເຂົ້າໄປບໍລິເວນຊາຍແດນ ໃຫ້ປະຕິບັດ ດັ່ງນີ້:

*ຕົວໜັງສືສີແດງແມ່ນ ການປັບປຸງໃນກອງປະຊຸມຄະນະຮັບຜິດຊອບ ຄັ້ງທີ 3*

2.1 ມີໃບອະນຸຍາດຈາກ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ຫຼື ກົມຄຸ້ມຄອງຄົນຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ ຫຼື ຫ້ອງການກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ທີ່ຕົນອາໄສຢູ່ ຫຼື ໃບອະນຸຍາດຈາກຫ້ອງການກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ຫຼື ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ທີ່ຕົນຈະເດີນທາງໄປ;

2.2 ໃນກໍລະນີຢູ່ຄ້າງຄືນ, ຜູ້ກ່ຽວ ຫຼື ຜູ້ທີ່ອຳນວຍຄວາມສະດວກດ້ານທີ່ພັກ ຕ້ອງແຈ້ງການພັກເຊົາຊົ່ວຄາວ ໃຫ້ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ/ປກສ ກຸ່ມບ້ານ ທີ່ກ່ຽວຂ້ອງ. ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ/ປກສ ກຸ່ມບ້ານ ຕ້ອງແຈ້ງເປັນລາຍລັກອັກສອນ;

2.3 ໃນກໍລະນີຈະເຂົ້າໄປ ຂອບເຂດຊາຍແດນ ຕ້ອງໄດ້ຮັບການເຫັນດີ ແລະ ຕ້ອງຢູ່ພາຍໃຕ້ການຕິດຕາມ ກວດກາ ຂອງກອງຮ້ອຍທະຫານຊາຍແດນປະຈຳພື້ນທີ່.

3. ປະຊາຊົນຊາຍແດນຂອງປະເທດໃກ້ຄຽງ ຈະເຂົ້າມາບໍລິເວນຊາຍແດນຂອງ ສປປ ລາວ ຕ້ອງປະຕິບັດ ກົດໝາຍ ວ່າດ້ວຍການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ແລະ/ຫຼື ລະບຽບການຄຸ້ມຄອງຊາຍແດນລະຫວ່າງສອງປະເທດ, ປະຕິບັດຕາມກຳນົດເວລາ, ຂອບເຂດ, ຈຸດປະສົງ ແລະ ເປົ້າໝາຍການເຄື່ອນໄຫວ ຢ່າງເຂັ້ມງວດ. ໃນກໍລະນີທີ່ຕ້ອງຢູ່ຂ້າມຄືນ ຕ້ອງລົງທະບຽນພັກເຊົາຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງ ສປປ ລາວ, ເມື່ອໝົດກຳນົດເວລາທີ່ໄດ້ຮັບອະນຸຍາດ ຕ້ອງອອກຈາກບໍລິເວນຊາຍແດນ. ໃນກໍລະນີທີ່ຕ້ອງພັກເຊົາເກີນເວລາທີ່ໄດ້ຮັບອະນຸຍາດ ຕ້ອງໄດ້ຮັບການເຫັນດີຈາກກອງຮ້ອຍທະຫານຊາຍແດນ ຫຼື ອົງການປົກຄອງເມືອງ/ບ້ານ ປະຈຳພື້ນທີ່.

4. ການຈັດຕັ້ງທີ່ນຳພາຄົນຕ່າງປະເທດ ເຂົ້າໄປບໍລິເວນຊາຍແດນ ຕ້ອງມີໜັງສືສະເໜີຈາກການຈັດຕັ້ງທີ່ກ່ຽວຂ້ອງ; ພະນັກງານທີ່ຕິດຕາມໄປ ຕ້ອງມີເອກະສານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້. ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ແລະ ຫ້ອງທະຫານຊາຍແດນຂັ້ນແຂວງ ບ່ອນທີ່ຈະໄປ ກ່ອນຢ່າງໜ້ອຍ 24 ຊົ່ວໂມງ.

ໃນກໍລະນີຄົນຕ່າງປະເທດທີ່ຢູ່ໃນຄະນະຜູ້ແທນ, ຄະນະຜູ້ແທນຂັ້ນສູງ ເດີນທາງເຂົ້າໄປບໍລິເວນຊາຍແດນ ໃຫ້ອົງການ, ການຈັດຕັ້ງທີ່ກ່ຽວຂ້ອງ (ອົງການທີ່ເຊີນ ຫຼື ເຮັດວຽກຮ່ວມກັບຄະນະ) ແຈ້ງເປັນລາຍລັກອັກສອນໃຫ້ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ແລະ ຫ້ອງທະຫານຊາຍແດນຂັ້ນແຂວງຊາບ ພ້ອມທັງແຕ່ງຕັ້ງພະນັກງານຕິດຕາມ ເພື່ອໃຫ້ຄຳແນະນຳ.

5. ບຸກຄົນທີ່ບໍ່ໄດ້ກຳນົດໃນຂໍ້ 1, 2, 3 ແລະ 4 ຂອງມາດຕານີ້ ແລະ ບຸກຄົນທີ່ກຳນົດໄວ້ໃນຂໍ້ 2 ມາດຕາ 12 ຂອງດຳລັດສະບັບນີ້ ບໍ່ສາມາດເຂົ້າໄປບໍລິເວນຊາຍແດນ.

ບັນຊີລາຍຊື່ບ້ານບໍລິເວນຊາຍແດນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບ ບ້ານທີ່ຢູ່ບໍລິເວນຊາຍແດນ ແຕ່ບໍ່ຢູ່ໃນບັນຊີລາຍຊື່ບ້ານບໍລິເວນຊາຍແດນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແມ່ນ ໃຫ້ປະຕິບັດ ຕາມກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 10 ການເຄື່ອນໄຫວຂອງຄົນ, ຍານພາຫະນະ ຢູ່ບໍລິເວນຊາຍແດນ**

1. ຄົນ, ຍານພາຫະນະ ເຄື່ອນໄຫວຢູ່ບໍລິເວນຊາຍແດນ ຕ້ອງມີເອກະສານຢັ້ງຢືນຕົວຕົນ, ເອກະສານອື່ນທີ່ກ່ຽວຂ້ອງກັບຍານພາຫະນະ ແລະ ໜັງສືອະນຸຍາດໃຫ້ເຄື່ອນໄຫວໃນແຕ່ລະຂົງເຂດວິຊາສະເພາະ ທີ່ອອກໃຫ້ໂດຍເຈົ້າໜ້າທີ່ທີ່ມີສິດ ແລະ ຕ້ອງປະຕິບັດຕາມການແນະນຳ, ກວດກາ, ຄຸ້ມຄອງຂອງກອງຮ້ອຍທະຫານຊາຍແດນ, ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ ແລະ ປກສ ກຸ່ມບ້ານປະຈຳພື້ນທີ່ ແລະ ກອງກຳລັງວິຊາສະເພາະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

2. ການເຄື່ອນໄຫວຂອງພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ແລະ ຍານພາຫະນະ ຢູ່ເຂດທ່ອງທ່ຽວ, ບໍລິການ, ການຄ້າ, ເຂດເສດຖະກິດດ່ານຊາຍແດນ, ບໍລິເວນດ່ານ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດອື່ນ ທີ່ສ້າງຂຶ້ນຢູ່ບໍລິເວນຊາຍແດນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ

ທີ່ກ່ຽວຂ້ອງ. ສຳລັບການເຄື່ອນໄຫວກ່ຽວຂ້ອງກັບ ຂອບເຂດຊາຍແດນ, ເຂດຫວງຫ້າມ ໃຫ້ປະຕິບັດຕາມມາດຕາ 9 ແລະ 10 ຂອງດຳລັດສະບັບນີ້.

3. ປະຊາຊົນຊາຍແດນຂອງປະເທດໃກ້ຄຽງ ທີ່ເຄື່ອນໄຫວຢູ່ບໍລິເວນຊາຍແດນຂອງ ສປປ ລາວ ຕ້ອງປະຕິບັດຕາມສົນທິສັນຍາ ກ່ຽວກັບລະບຽບການຊາຍແດນທີ່ ສປປ ລາວ ແລະ ປະເທດໃກ້ຄຽງເປັນພາຄີ ແລະ ກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

4. ການເຄື່ອນໄຫວອື່ນຢູ່ບໍລິເວນຊາຍແດນ ຕ້ອງສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ແລະ ດຳລັດສະບັບນີ້.

## ມາດຕາ 11 ໂຄງການພັດທະນາ ແລະ ການດຳເນີນກິດຈະການ ຢູ່ບໍລິເວນຊາຍແດນ

1. ໂຄງການ ແລະ ການກໍ່ສ້າງ ຢູ່ບໍລິເວນຊາຍແດນ ຕ້ອງໄດ້ຮັບການຮັບຮອງ ແລະ ອະນຸມັດຈາກອົງການທີ່ມີສິດ ຕາມກົດໝາຍ ແລະ ລະບຽບການ; ຕ້ອງຮັບປະກັນບໍ່ສົ່ງຜົນກະທົບຕໍ່ວຽກງານຊາຍແດນ; ຕ້ອງບໍ່ປ່ຽນແປງເຄື່ອງໝາຍຊີ້ບອກເສັ້ນຊາຍແດນ, ທຳລາຍ, ມ້າງເພ ຫຼື ເຮັດໃຫ້ຫຼັກໝາຍຊາຍແດນສູນຫາຍ; ຕ້ອງບໍ່ລະເມີດສົນທິສັນຍາ ກ່ຽວກັບລະບຽບການຊາຍແດນ ທີ່ ສປປ ລາວ ແລະ ປະເທດໃກ້ຄຽງເປັນພາຄີ. ໃນເວລາສ້າງໂຄງການ, ໂຄງການກໍ່ສ້າງ ຢູ່ບໍລິເວນຊາຍແດນ, ອົງການຄຸ້ມຄອງລັດ ກ່ຽວກັບ ການກໍ່ສ້າງຢູ່ພື້ນທີ່ ແລະ ນັກລົງທຶນ ຕ້ອງປະຕິບັດຕາມລະບຽບການຄຸ້ມຄອງຊາຍແດນລະຫວ່າງສອງປະເທດ ຢ່າງເຂັ້ມງວດ ແລະ ຕ້ອງບໍ່ສົ່ງຜົນກະທົບຕໍ່ ໂຄງການຊາຍແດນ, ພູມສັນຖານບໍລິເວນເສັ້ນຊາຍແດນແຫ່ງຊາດ, ເຄື່ອງໝາຍຊີ້ບອກເສັ້ນຊາຍແດນແຫ່ງຊາດ ແລະ ຫຼັກໝາຍຊາຍແດນ;

2. ສຳລັບໂຄງການ ແລະ ການກໍ່ສ້າງ ຕ້ອງຮັບປະກັນບໍ່ໃຫ້ສົ່ງຜົນກະທົບຕໍ່ການສ້າງ, ຄຸ້ມຄອງ, ປ້ອງກັນ ຊາຍແດນ, ການຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ລວມທັງສິ່ງແວດລ້ອມ ຢູ່ບໍລິເວນຊາຍແດນ, ເສັ້ນທາງລາດຕະເວນ ຢູ່ສອງຟາກຂອງຊາຍແດນ;

3. ກ່ອນຈະປະຕິບັດໂຄງການ ຫຼື ດຳເນີນການກໍ່ສ້າງ ຢູ່ຂອບເຂດຊາຍແດນ, ອົງການລັດຂັ້ນທ້ອງຖິ່ນທີ່ຮັບຜິດຊອບການກໍ່ສ້າງດັ່ງກ່າວ ຕ້ອງຂໍຄຳເຫັນເປັນລາຍລັກອັກສອນຈາກກະຊວງການຕ່າງປະເທດ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ກ່ອນສະເໜີລັດຖະບານຕົກລົງຮັບຮອງ. ອົງການທີ່ຖືກຂໍຄຳເຫັນ ຕ້ອງແຈ້ງຄຳເຫັນເປັນລາຍລັກອັກສອນໃຫ້ອົງການທີ່ສະເໜີ ພາຍໃນເວລາ 15 ລັດຖະການ.

ກ່ອນຈັດຕັ້ງປະຕິບັດໂຄງການ, ການກໍ່ສ້າງ ຜູ້ລົງທຶນຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຫ້ອງທະຫານຊາຍແດນຂັ້ນແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບຂັ້ນແຂວງ ແລະ ອຳນາດການປົກຄອງປະຈຳທ້ອງຖິ່ນຊາບກ່ອນຢ່າງໜ້ອຍ 3 ວັນລັດຖະການ.

4. ການຈັດຕັ້ງ ທີ່ເຂົ້າຮ່ວມໃນການສຳຫຼວດ, ອອກແບບ, ກໍ່ສ້າງ, ຈັດຕັ້ງປະຕິບັດບັນດາໂຄງການ, ການກໍ່ສ້າງ ຢູ່ບໍລິເວນຊາຍແດນ ຕ້ອງແຈ້ງ ກ່ຽວກັບ ບັນຊີລາຍຊື່ຄົນ, ຍານພາຫະນະ, ກຳນົດເວລາ, ຂອບເຂດ ແລະ ເນື້ອໃນການເຄື່ອນໄຫວ ໃຫ້ກອງຮ້ອຍທະຫານຊາຍແດນ, ອົງການປົກຄອງບ້ານ ປະຈຳພື້ນທີ່ ຊາບກ່ອນ 3 ວັນ ພ້ອມທັງປະສານສົມທົບກັບກອງຮ້ອຍທະຫານຊາຍແດນ, ອົງການປົກຄອງບ້ານປະຈຳພື້ນທີ່ ເພື່ອຄຸ້ມຄອງຄົນ, ຍານພາຫະນະ, ຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ ໃນເວລາເຄື່ອນໄຫວ ຢູ່ບໍລິເວນຊາຍແດນ.

5. ກອງຮ້ອຍທະຫານຊາຍແດນ ຕ້ອງແນະນຳ ແລະ ເຜີຍແຜ່ ໃຫ້ການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງຊາບ ກ່ຽວກັບ ເຄື່ອງໝາຍເສັ້ນຊາຍແດນແຫ່ງຊາດ, ເຂດແດນຂອງ "ຂອບເຂດຊາຍແດນ", "ເຂດຫວງຫ້າມ", ລະບຽບການອື່ນທີ່ກ່ຽວຂ້ອງກັບການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ; ຄວາມຮັບຜິດຊອບ ແລະ ພັນທະ ທີ່ຕ້ອງປະຕິບັດໃນເວລາເຄື່ອນໄຫວຢູ່ບໍລິເວນຊາຍແດນ ລວມທັງສົນທິສັນຍາ ກ່ຽວກັບ ລະບຽບການຊາຍແດນ ທີ່ ສປປ ລາວ ແລະ ປະເທດໃກ້ຄຽງເປັນພາຄີ.

**ມາດຕາ 12 ການຢຸດຕິຊົ່ວຄາວການເຄື່ອນໄຫວຢູ່ບໍລິເວນຊາຍແດນ**

1. ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ສາມາດຢຸດຕິຊົ່ວຄາວ ໃນກໍລະນີ ດັ່ງນີ້:

1.1 ມີຂໍ້ຂັດແຍ່ງ ກ່ຽວກັບຊາຍແດນ, ດິນແດນ ມີຄວາມສ່ຽງທີ່ເປັນໄພຂົ່ມຂູ່ຕໍ່ອະທິປະໄຕ, ຄວາມໝັ້ນຄົງຂອງຊາຍແດນແຫ່ງຊາດ;

1.2 ມີການປະທະກັນທາງອາວຸດ, ການປຸ້ນຈີ້, ການກໍ່ການຮ້າຍ, ກໍ່ຈາລະຈົນ, ການລັກພາຕົວ ຫຼື ເຫດການທີ່ສົ່ງຜົນກະທົບຕໍ່ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ ຢູ່ບໍລິເວນຊາຍແດນ;

1.3 ມີໄພພິບັດທາງທຳມະຊາດ, ອຸບັດຕິເຫດ, ພະຍາດລະບາດ, ເຫດການທາດເຄມີ ຫຼື ກຳມະລັງສີ ຮົ່ວໄຫຼ ຊຶ່ງມີຄວາມສ່ຽງທີ່ຈະເປັນອັນຕະລາຍຕໍ່ຊຸມຊົນ ແລະ ແຜ່ລະບາດຂ້າມຊາຍແດນ;

1.4 ໄດ້ຮັບແຈ້ງຈາກ ລັດຖະບານ, ອຳນາດການປົກຄອງທ້ອງຖິ່ນ ຫຼື ກຳລັງປ້ອງກັນຊາຍແດນຂອງປະເທດໃກ້ຄຽງ ກ່ຽວກັບ ການຢຸດຕິຊົ່ວຄາວການເດີນທາງເຂົ້າ-ອອກຊາຍແດນ.

2. ເພື່ອຮັບປະກັນຄວາມປອດໄພທາງ ຊີວິດ ແລະ ຊັບສິນຂອງປະຊາຊົນ; ສະກັດກັ້ນໄພພິບັດທາງທຳມະຊາດ, ອັກຄີໄພ, ນໍ້າຖ້ວມ, ພະຍາດລະບາດ ການເຄື່ອນໄຫວລຸ່ມນີ້ ຈະຖືກຢຸດຕິຊົ່ວຄາວ:

2.1 ການເຂົ້າໄປຂອບເຂດຊາຍແດນ;

2.2 ຕະຫຼາດນັດ, ການຈັດຕັ້ງບຸນປະເພນີ;

2.3 ການຜະລິດ, ການດຳເນີນທຸລະກິດ, ການກໍ່ສ້າງ;

2.4 ການສຳຫຼວດ ແລະ ຂຸດຄົ້ນຊັບພະຍາກອນ;

2.5 ການເຄື່ອນໄຫວອື່ນ ທີ່ພົວພັນກັບກໍລະນີທີ່ເກີດຂຶ້ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້.

3. ຜູ້ທີ່ມີສິດຕົກລົງຢຸດຕິຊົ່ວຄາວການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ມີ ດັ່ງນີ້:

3.1 ຫົວໜ້າກອງຮ້ອຍທະຫານຊາຍແດນ ຕົກລົງຢຸດຕິຊົ່ວຄາວ ບໍ່ເກີນ 12 ຊົ່ວໂມງ ໃນຂອບເຂດຊາຍແດນ ທີ່ຢູ່ໃນພື້ນທີ່ ທີ່ຕົນຮັບຜິດຊອບ ແລະ ຕ້ອງລາຍງານໃຫ້ຫົວໜ້າຫ້ອງທະຫານຊາຍແດນຂັ້ນແຂວງ ພ້ອມທັງແຈ້ງເປັນລາຍລັກອັກສອນໃຫ້ອົງການປົກຄອງເມືອງ/ບ້ານ ແລະ ອົງການທີ່ກ່ຽວຂ້ອງ ຢູ່ບໍລິເວນຊາຍແດນ ລວມທັງແຈ້ງອົງການປົກຄອງ, ກົມກອງເຮັດໜ້າທີ່ຄຸ້ມຄອງ, ປ້ອງກັນຊາຍແດນ (ແຂວງທີ່ຕິດຈອດ) ຂອງປະເທດໃກ້ຄຽງ;

3.2 ຫົວໜ້າຫ້ອງທະຫານຊາຍແດນຂັ້ນແຂວງ ຕົກລົງຢຸດຕິຊົ່ວຄາວ ບໍ່ເກີນ 24 ຊົ່ວໂມງ ໃນບໍລິເວນຊາຍແດນ ທີ່ຢູ່ໃນຂອບເຂດການຄຸ້ມຄອງຂອງຕົນ ແລະ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ອົງການປົກຄອງແຂວງ, ກອງບັນຊາການທະຫານຊາຍແດນ ພ້ອມທັງແຈ້ງເປັນລາຍລັກອັກສອນໃຫ້ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ອົງການເຮັດໜ້າທີ່ຄຸ້ມຄອງ, ປ້ອງກັນຊາຍແດນ (ແຂວງທີ່ຕິດຈອດ) ຂອງປະເທດໃກ້ຄຽງ.

ໃນກໍລະນີ ຫົວໜ້າບໍ່ຢູ່, ຮອງຫົວໜ້າທີ່ໄດ້ຮັບການມອບສິດ, ຮັກສາການແທນ ມີສິດຕົກລົງຢຸດຕິຊົ່ວຄາວ ແລະ ຕ້ອງຮັບຜິດຊອບຕໍ່ກົດໝາຍ, ຕໍ່ຫົວໜ້າ ກ່ຽວກັບ ການຕົກລົງຂອງຕົນ.

4. ກ່ອນຕົກລົງຢຸດຕິຊົ່ວຄາວ, ຜູ້ທີ່ມີສິດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ຂອງມາດຕານີ້ ຕ້ອງພິຈາລະນາບັນດາປັດໄຈ ລຸ່ມນີ້:

4.1 ລັກສະນະ ແລະ ລະດັບຄວາມຮ້າຍແຮງຂອງສະຖານະການທີ່ເກີດຂຶ້ນຢູ່ຊາຍແດນ. ໃນກໍລະນີເງື່ອນໄຂ, ປັດໄຈ ທີ່ຈະຢຸດຕິຊົ່ວຄາວຍັງບໍ່ຄົບຖ້ວນ ຕ້ອງໄດ້ສືບສວນ, ຊອກຫາ ແລະ ຄົ້ນຄວ້າ ສະພາບການຕົວຈິງ ກ່ອນຕົກລົງ;

4.2 ຄາດຄະເນຜົນກະທົບ ຕໍ່ການເຄື່ອນໄຫວຂອງບັນດາອົງການ, ການຈັດຕັ້ງ ແລະ ປະຊາຊົນຢູ່ ບໍລິເວນຊາຍແດນ ພາຍຫຼັງທີ່ໄດ້ຕົກລົງຢຸດຕິຊົ່ວຄາວ ເພື່ອອອກມາດຕະການທີ່ເໝາະສົມ.

4.3 ກຳນົດເວລາ, ຂອບເຂດບໍລິເວນທີ່ຕ້ອງຢຸດຕິຊົ່ວຄາວການເຄື່ອນໄຫວ ຕາມແຜນທີ່ ແລະ ໃນພາກສະໜາມ (ພື້ນທີ່ຕົວຈິງ).

5. ຜູ້ທີ່ມີສິດຕົກລົງຢຸດຕິຊົ່ວຄາວການເຄື່ອນໄຫວຢູ່ບໍລິເວນຊາຍແດນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ກະຊວງການຕ່າງປະເທດ ເພື່ອປະສານສົມທົບແກ້ໄຂໃນກໍລະນີທີ່ຈຳເປັນ; ຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ອົງການຂັ້ນເທິງ ກ່ຽວກັບ ການຕົກລົງຂອງຕົນ; ຖ້າສິ້ນສຸດເວລາຢຸດຕິຊົ່ວຄາວ ຫຼື ສະພາບການກັບຄືນສູ່ປົກກະຕິ ຕ້ອງຍົກເລີກການຢຸດຕິຊົ່ວຄາວ ພ້ອມທັງແຈ້ງເປັນລາຍລັກອັກສອນໃຫ້ອົງການທີ່ກ່ຽວຂ້ອງ, ກົມກອງ ຫຼື ອົງການເຮັດໜ້າທີ່ຄຸ້ມຄອງ, ປ້ອງກັນຊາຍແດນຂອງປະເທດໃກ້ຄຽງ ແລະ ແຈ້ງຜ່ານສື່ສັງຄົມໃຫ້ປະຊາຊົນ ຊາບ.

6. ຂັ້ນຕອນການຢຸດຕິຊົ່ວຄາວ:

6.1 ອອກຂໍ້ຕົກລົງຢຸດຕິຊົ່ວຄາວ ຕາມຮູບແບບທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້;

6.2 ອອກແຈ້ງການຢຸດຕິຊົ່ວຄາວ ຕາມຮູບແບບທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້;

6.3 ຊີ້ນຳ ແລະ ຕິດຕາມສະພາບການ ຢູ່ບໍລິເວນຢຸດຕິຊົ່ວຄາວ ຢ່າງໃກ້ຊິດ ເພື່ອແນະນຳໃຫ້ທຸກຄົນປະຕິບັດ, ແກ້ໄຂ ສະຖານະການທີ່ເກີດຂຶ້ນ ຕາມກົດໝາຍ;

6.4 ໃນກໍລະນີສິ້ນສຸດກຳນົດເວລາ 24 ຊົ່ວໂມງ, ຖ້າເຫັນວ່າມີຄວາມຈຳເປັນຕ້ອງໄດ້ສືບຕໍ່ການຢຸດຕິຊົ່ວຄາວ ຫົວໜ້າຫ້ອງທະຫານຊາຍແດນຂັ້ນແຂວງ ຕ້ອງສະເໜີອົງການປົກຄອງແຂວງເປັນຜູ້ຕົກລົງ ຕາມຮູບແບບທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້. ການກຳນົດເວລາສືບຕໍ່ຢຸດຕິຊົ່ວຄາວຕ້ອງບໍ່ເກີນ 24 ຊົ່ວໂມງ ພ້ອມທັງແຈ້ງໃຫ້ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ກອງກຳລັງຄຸ້ມຄອງ, ປ້ອງກັນຊາຍແດນ (ແຂວງທີ່ຕິດຈອດ) ຂອງປະເທດໃກ້ຄຽງ ຊາບ.

7. ຂັ້ນຕອນການຍົກເລີກການຢຸດຕິຊົ່ວຄາວ:

7.1 ອອກຂໍ້ຕົກລົງ ຍົກເລີກການຢຸດຕິຊົ່ວຄາວ ຕາມຮູບແບບທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້ ພ້ອມທັງແຈ້ງໃຫ້ອົງການ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຊາບ ຕາມຮູບແບບທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້;

7.2 ເຂົ້າຮ່ວມແກ້ໄຂບັນຫາ ທີ່ເກີດຂຶ້ນຈາກການຕົກລົງຢຸດຕິຊົ່ວຄາວ (ຖ້າມີ);

7.3 ປະເມີນຜົນກະທົບຂອງການຢຸດຕິຊົ່ວຄາວ ແລະ ລາຍງານໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ.

**ມາດຕາ 13 ການເຄື່ອນໄຫວຢູ່ຂອບເຂດຊາຍແດນ**

ບຸກຄົນ ທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂໍ້ 1 ຂອງດຳລັດສະບັບນີ້ ສາມາດເຄື່ອນໄຫວ ຢູ່ຂອບເຂດຊາຍແດນ.

ພົນລະເມືອງລາວ, ນອກຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂໍ້ 1 ຂອງດຳລັດສະບັບນີ້ ຈະເຂົ້າໄປຂອບເຂດຊາຍແດນ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງມີເອກະສານຢັ້ງຢືນຕົວຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
2. ຕ້ອງແຈ້ງ ເປັນລາຍລັກອັກສອນໃຫ້ກອງຮ້ອຍທະຫານຊາຍແດນ ຫຼື ອົງການປົກຄອງບ້ານ/ເມືອງ ປະຈຳພື້ນທີ່ ຊາບ ຕາມຮູບແບບທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້.

3. ໃນກໍລະນີຕ້ອງພັກຄ້າງຄືນ ຕ້ອງໄປລົງທະບຽນພັກເຊົານໍາກອງບັນຊາການປ້ອງກັນຄວາມສະຫງົບຂັ້ນເມືອງ/ປກສ ບ້ານ ຕາມກົດໝາຍ; ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບຂັ້ນເມືອງ/ປກສ ບ້ານ ຕ້ອງແຈ້ງເປັນເປັນລາຍລັກອັກສອນໃຫ້ກອງຮ້ອຍທະຫານຊາຍແດນປະຈໍາພື້ນທີ່ ຕາມຮູບແບບທີ່ໄດ້ກໍານົດໄວ້ໃນເອກະສານຊ້ອນທ້າຍຂອງດໍາລັດສະບັບນີ້ ເພື່ອປະສານງານໃນການຕິດຕາມ ແລະ ຄຸ້ມຄອງ.

ອົງການ, ການຈັດຕັ້ງ ທີ່ເຄື່ອນໄຫວ ຢູ່ຂອບເຂດຊາຍແດນ ຕ້ອງແຈ້ງເປັນລາຍລັກອັກສອນ ກ່ຽວກັບບັນຊີລາຍຊື່ຄົນ, ຍານພາຫະນະ, ກໍານົດເວລາ, ຂອບເຂດ ແລະ ເນື້ອໃນການເຄື່ອນໄຫວໃຫ້ກອງຮ້ອຍທະຫານຊາຍແດນປະຈໍາພື້ນທີ່ ຊາບ.

### ມາດຕາ 14 ການເຄື່ອນໄຫວຢູ່ເຂດຫວງຫ້າມ

ພົນລະເມືອງລາວ, ຄົນຕ່າງປະເທດ ໃນເວລາເຂົ້າໄປເຂດຫວງຫ້າມ (ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດໃຫ້ດໍາລົງຊີວິດຖາວອນ ຫຼື ເຮັດວຽກຢູ່ໃນເຂດດັ່ງກ່າວ) ຕ້ອງມີເອກະສານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 13 ຂອງດໍາລັດສະບັບນີ້ ແລະ ຕ້ອງໄດ້ຮັບອະນຸຍາດຈາກຫົວໜ້າ ອົງການ, ໜ່ວຍງານຄຸ້ມຄອງເຂດຫວງຫ້າມ.

ເຂດຫວງຫ້າມ ຕ້ອງມີລະບຽບການປ້ອງກັນສະເພາະ ໂດຍແມ່ນຫົວໜ້າອົງການ, ໜ່ວຍງານຄຸ້ມຄອງເຂດຫວງຫ້າມນັ້ນ ເປັນຜູ້ກໍານົດ.

## ໝວດທີ 4
## ຂໍ້ຫ້າມ

### ມາດຕາ 15 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ມີພຶດຕິກໍາ ດັ່ງນີ້:

1. ທໍາລາຍ, ເຄື່ອນຍ້າຍ ຫຼື ເຮັດໃຫ້ຫຼັກໝາຍຊາຍແດນແຫ່ງຊາດ, ພູມສັນຖານບໍລິເວນເສັ້ນຊາຍແດນແຫ່ງຊາດ ຫຼື ເຄື່ອງໝາຍທີ່ຊີ້ບອກເສັ້ນຊາຍແດນ ເປ່ເພ, ສູນຫາຍ ລວມທັງປ້າຍຊີ້ບອກ ບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມ ແລະ ການກໍ່ສ້າງຊາຍແດນ;

2. ເຮັດໃຫ້ທິດທາງການໄຫຼຂອງແມ່ນໍ້າຕາມທໍາມະຊາດ ມີການປ່ຽນແປງ, ເຮັດໃຫ້ແຫຼ່ງນໍ້າບົກແຫ້ງ, ເຮັດໃຫ້ນໍ້າຖ້ວມ, ສ້າງມົນລະພິດໃຫ້ແກ່ແມ່ນໍ້າຊາຍແດນ, ຫ້ວຍນໍ້າຊາຍແດນ;

3. ພັກອາໄສ, ຂຸດຄົ້ນເຄື່ອງປ່າຂອງດົງ, ສໍາຫຼວດ, ບິນຖ່າຍພາບທາງອາກາດ ແລະ ຂຸດຄົ້ນແຮ່ທາດ ແລະ ດໍາເນີນການປະມົງ ທີ່ຂັດກັບກົດໝາຍ;

4. ຂ້າມຜ່ານຊາຍແດນ ເພື່ອທໍາການຜະລິດກະສິກໍາ ແລະ ລ່າສັດ;

5. ຝັງສົບ, ເຄື່ອນຍ້າຍຫຼຸມຝັງສົບ, ເຄື່ອນຍ້າຍຊາກສົບ, ກະດູກ, ພືດ, ສັດ, ຊາກສັດ ຜ່ານຊາຍແດນໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ມີສິດຂອງ ສປປ ລາວ;

6. ຍິງປືນຂ້າມຊາຍແດນ, ເຮັດໃຫ້ເກີດລະເບີດ, ຕັດ ຫຼື ຈູດຕົ້ນໄມ້ ເພື່ອບຸກເບີກພື້ນທີ່ ຢູ່ຂອບເຂດຊາຍແດນ;

7. ຖ່າຍວີດີໂອ, ຖ່າຍຮູບ, ບັນທຶກສຽງ, ສໍາຫຼວດ ແລະ ແຕ້ມຮູບທິວທັດ ຢູ່ບ່ອນຫວງຫ້າມ ໃນບໍລິເວນຊາຍແດນ;

8. ໃຫ້ສິນບົນແກ່ເຈົ້າໜ້າທີ່, ລັກລອບຂົນສົ່ງ, ເຄື່ອນຍ້າຍສິນຄ້າທີ່ຜິດກົດໝາຍ ຂ້າມຊາຍແດນ, ຄ້າຂາຍເຖື່ອນ;

9. ມີພຶດຕິກໍາອື່ນ ທີ່ເປັນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາ ກ່ຽວກັບ ລະບຽບການຊາຍແດນ ທີ່ ສປປ ລາວ ແລະ ປະເທດໃກ້ຄຽງເປັນພາຄີ.

### ມາດຕາ 16 ຂໍ້ຫ້າມສຳລັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ

ຫ້າມ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ຕົກລົງປ່ຽນແປງເສັ້ນຊາຍແດນແຫ່ງຊາດ ຫຼື ເຮັດໃຫ້ຊາຍແດນແຫ່ງຊາດມີການປ່ຽນແປງ ຕາມລຳພັງໃຈ;
2. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ, ຮັບສິນບົນ, ເມີນເສີຍຕໍ່ການລັກລອບເຂົ້າບໍລິເວນຊາຍແດນຂອງຄົນ, ພາຫະນະ ຫຼື ປ່ອຍໃຫ້ມີການຂົນສິ່ງຜິດກົດໝາຍຂ້າມຜ່ານຊາຍແດນ, ບັງຄັບ, ນາບຂູ່ຜູ້ອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ ກ່ຽວກັບວຽກງານຄຸ້ມຄອງການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ;
3. ເປີດເຜີຍຄວາມລັບ ກ່ຽວກັບວຽກງານຊາຍແດນແຫ່ງຊາດ ທີ່ບໍ່ໄດ້ຮັບອະນຸຍາດຈາກອົງການທີ່ມີສິດ;
4. ປະລະໜ້າທີ່, ເມີນເສີຍ ໃນການປະຕິບັດວຽກງານຊາຍແດນແຫ່ງຊາດ;
5. ອອກ ຄຳສັ່ງ, ລະບຽບການ ທີ່ຂັດກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ສົນທິສັນຍາ ກ່ຽວກັບ ຊາຍແດນ ແລະ ລະບຽບການຊາຍແດນ ທີ່ ສປປ ລາວ ແລະ ປະເທດໃກ້ຄຽງເປັນພາຄີ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ

### ມາດຕາ 17 ອົງການຄຸ້ມຄອງ ແລະ ກວດກາ

ອົງການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ປະກອບດ້ວຍ:

1. ກະຊວງການຕ່າງປະເທດ;
2. ກະຊວງປ້ອງກັນປະເທດ;
3. ກະຊວງປ້ອງກັນຄວາມສະຫງົບ;
4. ກະຊວງແຜນການ ແລະ ການລົງທຶນ;
5. ກະຊວງອຸດສາຫະກຳ ແລະ ການຄ້າ;
6. ກະຊວງການເງິນ;
7. ກະຊວງພາຍໃນ;
8. ອົງການປົກຄອງທ້ອງຖິ່ນ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ.

### ມາດຕາ 18 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ

ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍ ແລະ ນິຕິກຳ ໃຫ້ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດ ພ້ອມທັງຈັດຕັ້ງປະຕິບັດ;
2. ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ;

3. ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ອົງການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການຈັດຕັ້ງປະຕິບັດສົນທິສັນຍາ ກ່ຽວກັບ ຊາຍແດນ, ດິນແດນ ບົນພື້ນຖານສົນທິສັນຍາ ກ່ຽວກັບ ການກຳນົດເສັ້ນຊາຍແດນແຫ່ງຊາດ ທີ່ ສປປ ລາວ ເປັນພາຄີ.

4. ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ອົງການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການເຈລະຈາ, ແກ້ໄຂບັນຫາທີ່ເກີດຂຶ້ນ ທີ່ພົວພັນກັບອະທິປະໄຕຂອງຊາດ ແລະ ຊາຍແດນ.

5. ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການສ້າງກົນໄກປະສານງານ ກ່ຽວກັບ ການແກ້ໄຂສະພາບການ, ການສະໜອງຂໍ້ມູນ ຂ່າວສານ, ເອກະສານ, ແນະນຳວຽກງານການຕ່າງ ປະເທດ, ວຽກງານສະຫຼຸບສັງລວມບັນຫາກ່ຽວຂ້ອງກັບການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ.

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢູ່ບໍລິເວນຊາຍແດນ ໃຫ້ລັດຖະບານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ມາດຕາ 19 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນປະເທດ

ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ກະຊວງປ້ອງກັນປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ, ປັບປຸງແຜນຍຸດທະສາດ, ນະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການເຄື່ອນໄຫວຢູ່ບໍລິເວນຊາຍແດນ; ຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ນະໂຍບາຍ ແລະ ນິຕິກຳ ໃຫ້ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ;

2. ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບການເຄື່ອນໄຫວຢູ່ບໍລິເວນຊາຍແດນ;

3. ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ໃນການສ້າງກົນໄກປະສານງານລະຫວ່າງບັນດາກຳລັງ ເພື່ອປະຕິບັດໜ້າທີ່ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ.

4. ປະສານສົມກັບກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຕ່າງປະເທດ ໃນການເກັບກຳສະຖິຕິຄົນຕ່າງປະເທດເຂົ້າໄປບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມໃນແຕ່ລະປີ; ຈັດຕັ້ງສະຫຼຸບການຈັດຕັ້ງປະຕິບັດໜ້າທີ່ສ້າງ, ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢູ່ບໍລິເວນຊາຍແດນ.

5. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງການເຄື່ອນໄຫວຢູ່ບໍລິເວນຊາຍແດນ;

6. ຊີ້ນຳກອງບັນຊາການທະຫານຊາຍແດນ ໃນການປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ກ່ຽວກັບການຄຸ້ມຄອງການເຄື່ອນໄຫວຢູ່ບໍລິເວນຊາຍແດນ ຕາມກົດໝາຍ ແລະ ລະບຽບການ;

7. ຈັດຕັ້ງ-ນຳໃຊ້ກຳລັງ, ຍານພາຫະນະ, ອາວຸດ, ຍຸດໂທປະກອນ ແລະ ເຄື່ອນໄຫວລາດຕະເວນ ເພື່ອກວດກາ, ຄວບຄຸມ ຄົນ, ຍານພາຫະນະ ທີ່ເຂົ້າບໍລິເວນຊາຍແດນ, ຂອບເຂດຊາຍແດນ ຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢູ່ບໍລິເວນຊາຍແດນ;

8. ຕ້ານ ແລະ ສະກັດກັ້ນອາຊະຍາກຳ, ການຊື້ຂາຍ, ເຄື່ອນຍ້າຍສິນຄ້າທີ່ຜິດກົດໝາຍ, ຢາເສບຕິດ, ການຄ້າອາວຸດເສິກ, ການຄ້າມະນຸດ, ການລັກລອບຂຸດຄົ້ນຊັບພະຍາກອນທຳມະຊາດ ແລະ ການກະທຳຜິດອື່ນ ຢູ່ບໍລິເວນຊາຍແດນ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຄຸ້ມຄອງຢູ່ບໍລິເວນຊາຍແດນ ໃຫ້ກະຊວງການຕ່າງປະເທດ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 20 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ

ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ, ຄຳສັ່ງ, ລະບຽບການ ແລະ ທິດຊີ້ນຳຂອງຂັ້ນເທິງ ກ່ຽວກັບວຽກງານການເຄື່ອນໄຫວຢູ່ບໍລິເວນຊາຍແດນຢ່າງເຂັ້ມງວດ;
2. ຊີ້ນຳກອງບັນຊາການ ປກສ ຂັ້ນແຂວງ, ປກສ ເຂດເສດຖະກິດພິເສດ, ປກສ ຂັ້ນເມືອງ ແລະ ປກສ ກຸ່ມບ້ານ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມຄວາມຮັບຜິດຊອບຂອງຕົນ ກ່ຽວກັບ ການຄຸ້ມຄອງການເຄື່ອນໄຫວຢູ່ບໍລິເວນຊາຍແດນ ຕາມກົດໝາຍ ແລະ ລະບຽບການ;
3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງໃນການແລກປ່ຽນ ຫຼື ສະໜອງຂໍ້ມູນຂ່າວສານ, ສະພາບການ, ການເຄື່ອນໄຫວຂອງບຸກຄົນ ຫຼື ກຸ່ມຄົນບໍ່ດີ ທີ່ລະເມີດກົດໝາຍ ແລະ ລະບຽບການ ຢູ່ບໍລິເວນຊາຍແດນ;
4. ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ອົງການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການສ້າງແຜນການປ້ອງກັນຄວາມສະຫງົບແຫ່ງຊາດ, ສົມທົບແໜ້ນການປ້ອງກັນຄວາມສະຫງົບຊາຍແດນກັບການປ້ອງກັນຄວາມສະຫງົບພາຍໃນ; ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການແນະນຳທະຫານຊາຍແດນເຂົ້າຮ່ວມວຽກງານປົກປັກຮັກສາຄວາມໝັ້ນຄົງທາງດ້ານການເມືອງ, ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;
5. ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນປະເທດໃນການວາງແຜນ ແນວທາງ, ແຜນຍຸດໂທບາຍ ກ່ຽວກັບ ການຕ້ານ ແລະ ສະກັດກັ້ນ ອາຊະຍາກຳ ແລະ ການລະເມີດກົດໝາຍ ກ່ຽວກັບການປ້ອງກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;
6. ປະສານສົມທົບກັບກະຊວງປ້ອງກັນປະເທດ ແລະ ກະຊວງການຕ່າງປະເທດ ໃນການເກັບກຳສະຖິຕິພົນລະເມືອງລາວ ແລະ ຄົນຕ່າງປະເທດເຂົ້າໄປບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມໃນແຕ່ລະປີ; ຈັດຕັ້ງສະຫຼຸບການຈັດຕັ້ງປະຕິບັດໜ້າທີ່ສ້າງ, ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢູ່ບໍລິເວນຊາຍແດນ;
7. ສົບທົບກັບກອງບັນຊາການທະຫານຊາຍແດນ, ຮ່ວມມື, ເຄື່ອນໄຫວລາດຕະເວນຮ່ວມໃນການປ້ອງກັນຄວາມສະຫງົບຊາຍແດນ ເປັນຕົ້ນ ການໂຄສະນາ, ເຜີຍແຜ່ກົດໝາຍ ແລະ ລະບຽບການ ກ່ຽວກັບ ການປົກປັກຮັກສາຄວາມສະຫງົບຊາຍແດນ, ການເຂົ້າ-ອອກ ສປປ ລາວ ແລະ ອື່ນໆ;
8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢູ່ບໍລິເວນຊາຍແດນ ໃຫ້ກະຊວງການຕ່າງປະເທດ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

*ຕົວໜັງສືສີແດງແມ່ນ ການປັບປຸງໃນກອງປະຊຸມຄະນະຮັບຜິດຊອບ ຄັ້ງທີ 3*

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ**

ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ກະຊວງແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນປະເທດ, ກະຊວງການຕ່າງປະເທດ, ອົງການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການສັງລວມຄວາມຕ້ອງການ ກ່ຽວກັບ ການລົງທຶນພັດທະນາໂຄງລ່າງພື້ນຖານ ຢູ່ບໍລິເວນຊາຍແດນ, ສ້າງກັນຕະຝັ່ງເຈື່ອນຕາມລຳນ້ຳຊາຍແດນ ແລະ ຫຼັກໝາຍຊາຍແດນ ລາຍງານນາຍົກລັດຖະມົນຕີ ເພື່ອຈັດສັນຮ່ວງງົບປະມານທີ່ເໝາະສົມ ໃຫ້ແກ່ການລົງທຶນກໍ່ສ້າງ ແນໃສ່ປັບປຸງວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ;

2. ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ອົງການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການສ້າງກົນໄກ, ນະໂຍບາຍ ກ່ຽວກັບ ການລົງທຶນພັດທະນາ, ສ້າງເງື່ອນໄຂໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ;

3. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບ ການລົງທຶນ ແລະ ເຂດເສດຖະກິດພິເສດ ຢູ່ບໍລິເວນຊາຍແດນ;

4. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຄຸ້ມຄອງ ຢູ່ບໍລິເວນຊາຍແດນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ກະຊວງການຕ່າງປະເທດ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ** *(ຈະປະກອບຄຳເຫັນຕາມຫຼັງ)*

ໃນການຄຸ້ມຄອງການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບກະຊວງ, ຂະແໜງການ, ອົງການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ໃນການສ້າງນະໂຍບາຍພັດທະນາການຄ້າ ຢູ່ບໍລິເວນຊາຍແດນ.

2. ປະສານສົມທົບກັບກະຊວງປ້ອງກັນປະເທດ, ກະຊວງການເງິນ ໃນການແນະນຳການຊື້, ຂາຍ, ການແລກປ່ຽນສິນຄ້າຂອງປະຊາຊົນຊາຍແດນ;

3. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຄຸ້ມຄອງ ຢູ່ບໍລິເວນຊາຍແດນ ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຄຸ້ມຄອງ ຢູ່ບໍລິເວນຊາຍແດນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ກະຊວງການຕ່າງປະເທດ ຢ່າງເປັນປົກກະຕິ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ກະຊວງການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນປະເທດ, ອົງການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການສ້າງແຜນ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານແຫ່ງ

*ຕົວໜັງສືສີແດງແມ່ນ ການປັບປຸງໃນກອງປະຊຸມຄະນະຮັບຜິດຊອບ ຄັ້ງທີ 3*

ລັດປະຈຳປີ ເຂົ້າໃນການສ້າງ ແລະ ປັບປຸງໂຄງລ່າງພື້ນຖານ ຢູ່ບໍລິເວນດ່ານຊາຍແດນ ໂດຍນຳໃຊ້ງົບປະມານຂັ້ນທ້ອງຖິ່ນ;

2. ປະສານສົມທົບກັບ ກອງບັນຊາການທະຫານຊາຍແດນ ແລະ ພາກສ່ວນທີ່ກ່ຽວຂ້ອງຕາມບໍລິເວນຊາຍແດນ, ສ້າງຕາໜ່າງຂ່າວ, ສ້າງກົນໄກປະສານງານແລກປ່ຽນຂໍ້ມູນແຫຼ່ງຂ່າວຮ່ວມກັບເຈົ້າໜ້າທີ່ປະຈຳດ່ານຊາຍແດນຂອງປະເທດທີ່ມີຊາຍແດນຕິດຈອດ ກ່ຽວກັບ ວຽກງານສືບສວນ-ສອບສວນ ແລະ ປາບປາມການຄ້າຂາຍເຖື່ອນທຸກຮູບແບບ ຕາມບໍລິເວນດ່ານຊາຍແດນ;

3. ປະສານສົມທົບກັບກະຊວງ, ຂະແໜງການ, ອົງການປົກຄອງແຂວງທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ຄຸ້ມຄອງກົນໄກ, ນະໂຍບາຍການເງິນ ແລະ ສ້າງເງື່ອນໄຂໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຢູ່ບໍລິເວນຊາຍແດນ;

4. ຕິດຕາມ ກວດກາ, ປະເມີນຜົນ, ສະຫຼຸບ ລາຍງານ ການເຄື່ອນໄຫວວຽກງານທີ່ຕິດພັນກັບຂະແໜງການເງິນ ຢູ່ບໍລິເວນຊາຍແດນ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ ໃຫ້ກະຊວງການຕ່າງປະເທດ ຢ່າງເປັນປົກກະຕິ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 24 ສິດ ແລະ ໜ້າທີ່ຂອງກະຊວງພາຍໃນ

ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ກະຊວງພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສົມທົບກັບຂະແໜງການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງດຳລັດສະບັບນີ້ ໃນການເຄື່ອນໄຫວຕິດຕາມ ກວດກາ ບັນດາການລົງທຶນພັດທະນາ ໂຄງລ່າງພື້ນຖານຢູ່ບໍລິເວນຊາຍແດນ;
2. ສົມທົບກັບອົງການປົກຄອງທ້ອງຖິ່ນທຸກຂັ້ນ ສຳຫຼວດ ພື້ນທີ່ບໍລິເວນຊາຍແດນ, ເກັບກຳຂໍ້ມູນ ຄ່າພິກັດ, ຈຸດທີ່ຕັ້ງຂອງບ້ານຊາຍແດນ, ສຶກສາສຳຫຼວດແຕ້ມແຜນທີ່ບໍລິເວນພື້ນທີ່ ທີ່ມີການປ່ຽນແປງພູມສັນຖານຢ່າງເປັນປົກກະຕິ ພ້ອມທັງສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອເອົາເຂົ້າໃສ່ແຜນທີ່ການປົກຄອງໃນແຕ່ລະໄລຍະ;
3. ສ້າງແຜນການ, ໂຄງການ ກ່ຽວກັບ ການສ້າງແຜນທີ່ ເຂດຊາຍແດນ, ບໍລິເວນຊາຍແດນ, ຂອບເຂດຊາຍແດນ ແລະ ການກຳນົດບ້ານບໍລິເວນຊາຍແດນ;
4. ຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວຢູ່ບໍລິເວນຊາຍແດນ ກ່ຽວກັບ ການສຳຫຼວດວັດແທກ, ຖ່າຍພາບທາງອາກາດ ແລະ ສ້າງແຜນທີ່;
5. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານການຄຸ້ມຄອງ ຢູ່ບໍລິເວນຊາຍແດນ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ກະຊວງການຕ່າງປະເທດ ຢ່າງເປັນປົກກະຕິ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

### ມາດຕາ 25 ສິດ ແລະ ໜ້າທີ່ ຂອງອົງການປົກຄອງແຂວງ, ນະຄອນຫຼວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ

ໃນການຄຸ້ມຄອງ ແລະ ກວດກາ ການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ອົງການປົກຄອງແຂວງ, ນະຄອນຫຼວງ ທີ່ມີເຂດການປົກຄອງຕິດກັບຊາຍແດນແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳອົງການທີ່ຮັບຜິດຊອບ, ພະແນກການ, ອົງການຈັດຕັ້ງມະຫາຊົນ ໃນການປະສານສົມທົບກັບກຳລັງທະຫານຊາຍແດນ ໃນການສ້າງບໍລິເວນຊາຍແດນ ໃຫ້ມີຄວາມເຂັ້ມແຂງໜັກແໜ້ນທາງດ້ານ ການເມືອງ, ເສດຖະກິດ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

2. ຊີ້ນຳພະແນກການທີ່ຮັບຜິດຊອບໃນແຂວງ, ນະຄອນຫຼວງ ປະສານສົມທົບກັບກຳລັງທະຫານຊາຍແດນ ໃນການສຳຫຼວດ, ກວດກາເຂດແດນຂອງ ຂອບເຂດຊາຍແດນ, ເຂດຫວງຫ້າມ; ຄຸ້ມນະພາບ ແລະ ການຕັ້ງປ້າຍແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

3. ຊີ້ນຳພະແນກການ, ອົງການຈັດຕັ້ງມະຫາຊົນ ແລະ ກຳລັງທີ່ກ່ຽວຂ້ອງ ໃນການປະສານສົມທົບກັບທະຫານຊາຍແດນ ແລະ ອົງການທີ່ກ່ຽວຂ້ອງໃນການສ້າງ ແລະ ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕ້ານ ແລະ ສະກັດກັ້ນອາຊະຍາກຳ ຢູ່ບໍລິເວນຊາຍແດນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

4. ຊີ້ນຳພະແນກການຂອງແຂວງ ໃນການປະຕິບັດໜ້າທີ່ຄຸ້ມຄອງຕາມຂະແໜງການ, ສ້າງເງື່ອນໄຂສະດວກ ກ່ຽວກັບ ລະບອບນະໂຍບາຍທາງດ້ານເສດຖະກິດ, ພາສີ-ອາກອນ, ທີ່ດິນໃຫ້ວິສາຫະກິດ, ບຸກຄົນ, ນັກລົງທຶນໃນໂຄງການກໍ່ສ້າງ, ໂຄງການພັດທະນາເສດຖະກິດ-ສັງຄົມ ຢູ່ບໍລິເວນຊາຍແດນ ຕາມກົດໝາຍ;

5. ໃນກໍລະນີມີການປັບປຸງ ກ່ຽວກັບເຂດແດນການປົກຄອງຂອງບ້ານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ມີເຂດແດນການປົກຄອງຕິດກັບຊາຍແດນແຫ່ງຊາດ ຕ້ອງສັງລວມ ແລະ ລາຍງານໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ ແລະ ກະຊວງພາຍໃນ ເພື່ອສະເໜີລັດຖະບານກຳນົດເພີ່ມ ຫຼື ຕັດອອກຈາກບັນຊີລາຍຊື່ບ້ານບໍລິເວນຊາຍແດນ;

6. ຈັດຕັ້ງໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມກົດໝາຍໃຫ້ພະນັກງານ ແລະ ປະຊາຊົນ ກ່ຽວກັບການສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ, ການປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

7. ສ້າງແຜນການປະຈຳປີ ແລະ ສະເໜີສະພາປະຊາຊົນແຂວງ ຮັບຮອງ ເພື່ອຈັດສັນງົບປະມານທ້ອງຖິ່ນເຂົ້າໃນວຽກງານສ້າງ, ຄຸ້ມຄອງ ແລະ ປ້ອງກັນຊາຍແດນແຫ່ງຊາດ, ຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ;

8. ສະຫຼຸບລາຍງານ ວຽກງານການຄຸ້ມຄອງການເຄື່ອນໄຫວຢູ່ບໍລິເວນຊາຍແດນ ລາຍງານຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 26 ສິດ ແລະ ໜ້າທີ່ຂອງ ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ

ກະຊວງ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ປະສານສົມທົບກັບກະຊວງປ້ອງກັນປະເທດ ໃນການສ້າງ, ຄຸ້ມຄອງ, ປ້ອງກັນຊາຍແດນແຫ່ງຊາດ, ປົກປັກຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢູ່ບໍລິເວນຊາຍແດນ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

### ມາດຕາ 27 ເນື້ອໃນການກວດກາ

ເນື້ອໃນການກວດກາການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຢູ່ບໍລິເວນຊາຍແດນ;
2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ກ່ຽວຂ້ອງ;
3. ການປະຕິບັດວຽກງານການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ຂອງການຈັດຕັ້ງທີ່ກ່ຽວຂ້ອງ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 28 ຮູບການກວດກາ**

ຮູບການກວດກາການເຄື່ອນໄຫວຢູ່ບໍລິເວນຊາຍແດນ ມີ ສາມ ຮູບການ ດັ່ງນີ້ :

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອຫາກເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໂດຍຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

ໃນການດຳເນີນການກວດກາການເຄື່ອນໄຫວຢູ່ບໍລິເວນຊາຍແດນ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳທີ່ກ່ຽວຂ້ອງກັບການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 31 ງົບປະມານ**

ການຄຸ້ມຄອງການເຄື່ອນໄຫວ ຢູ່ບໍລິເວນຊາຍແດນ ແມ່ນນຳໃຊ້ງົບປະມານຂອງລັດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງຂັ້ນແຂວງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

*ຕົວໜັງສືສີແດງແມ່ນ ການປັບປຸງໃນກອງປະຊຸມຄະນະຮັບຜິດຊອບ ຄັ້ງທີ 3*

**ມາດຕາ 33 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນທີ.........................................ເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

*ຕົວໜັງສືສີແດງແມ່ນ ການປັບປຸງໃນກອງປະຊຸມຄະນະຮັບຜິດຊອບ ຄັ້ງທີ 3*